
ສາລິກາ
ລີ້ນດົ່ມ
ໂດຍ ງາະວົມເພ

# ສາລິກາຄືນຖິ່ນ

## ໂດຍ: ກະອິນເນ

ສຳນັກພິມແສງສຸວັນ ຈັດພິມ

2011

# ສາລິກາຄືນຖິ່ນ

*ໂດຍ: ກະວິນເນ*

ບັນນາທິການ: ກິງເດືອນ ເນດຕະວົງ
ອອກແບບ-ຈັດໜ້າ ຈັດພິມໂດຍ: ສຳນັກພິມແສງສຸວັນ
ພິສູດອັກສອນ: ຄະນະບັນນາທິການ ສຳນັກພິມແສງສຸວັນ

ຈຳນວນພິມ: 2.000 ຫົວ
ຂະໜາດພິມ: 14,5 x 21 ຊມ, ຈຳນວນໜ້າ: 72 ໜ້າ
ເລກທະບຽນພິມຈຳໜ່າຍ 322 ພຈ 14102011
ພິມທີ່: **SSP** ການພິມ

© **ສະຫງວນລິຂະສິດ**

ພິມຄັ້ງທີ **I**
ປີ 2011

*ສຳນັກພິມແສງສວັນ SENGSOUVANH Publishing Co.,LTD*
09 ຖະໜົນໜອງບົວທອງ, ບ້ານໂພນຄຳ, ເມືອງສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ. ລາວ
ໂທຕັ້ງໂຕະ ແລະ ໂທລະສານ : (856) 21 540344
ມືຖື : *(856) 20 55607004, 55526028*
*Email: sengsouvanh_publishing@hotmail.com*

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ກະວິນເນ

ສາລິກາຄືນຖິ່ນ / ກະວິນເນ, ບັນນາທິການ ກິງເດືອນ ເນດຕະວົງ. -- ວຽງຈັນ : ສຳນັກພິມແສງສຸວັນ, 2011.

72 ໜ້າ ; 21 ຊມ

1. ເລື່ອງສັ້ນ. 2. ກິງເດືອນ ເນດຕະວົງ, ບັນນາທິການ. I. ຊື່ເລື່ອງ.

808.84--dc21
ISBN 978-9932-404-35-3

# ຄຳນຳສຳນັກພິມ

ສາລິກາຄືນຖິ່ນ ເປັນເລື່ອງທີ່ແຝງດ້ວຍຄວາມຮູ້ສຶກຂອງຄວາມຜູກພັນ ແລະຫ່ວງໃຍ ບົນພື້ນຖານຂອງຄຳວ່າຮັກ, ແມ່ນວ່າຈະເປັນສັດເດຍລະສານ ກໍຍັງມີຈິດໃຈຜູກແໜ້ນຕໍ່ກັນ ແລະມີຄວາມຊື່ສັດ, ຍຶດຖືຄຳໝັ້ນສັນຍາຕໍ່ຜູ້ທີ່ອຸປະກາລະຄຸນ ຢ່າງທີ່ເປັນໄປຕາມທຳມະຊາດຂອງເຜົ່ານົກສາລິກາ

ກະວີເນ, ນັກປະພັນທີ່ມີຄົມຄາຍແບບສຸນທະລີ ສາມາດນຳພານັກອ່ານໃຫ້ມີຄວາມຊຶ້ງໃນຈິນຕະນາການຂອງເຂົາ ຕັ້ງແຕ່ຂັ້ນຕົ້ນບົດ ຈົນຮອດບາດຈົບລົງ

ເປັນໜັງສືເລື່ອງທີ່ຮຽກຮ້ອງຄວາມສົນໃຈຂອງຜູ້ອ່ານ... ພຽງແຕ່ທ່ານຕັດສິນໃຈເປັນເຈົ້າຂອງ, ອ່ານແລ້ວຈະບໍ່ຜິດຫວັງ ດັ່ງຄຳນຳຂອງວັນນະສິນ ແລະ ເຈົ້າຂອງນາມປາກກາໄດ້ຝາກໄວ້

ລອງສຳຜັດດ້ວຍຕົວທ່ານເອງ ທ່ານຈະຊຶ້ງເຖິງຄວາມຜູກພັນລະຫວ່າງຄອບຄົວ, ພໍ່ແມ່ລູກ ແລະ ຄູ່ຊີວິດ, ສິ່ງທີ່ປະທັບໃຈທີ່ຄວນຮໍ່າຮຽນນຳກໍຄື ຄວາມມີຄຸນນະທຳທີ່ແຝງໄວ້ໃນເລື່ອງນີ້

ສຳນັກພິມແສງສຸວັນ ພູມໃຈຈັດພິມຂຶ້ນ ເພື່ອມອບເປັນລາງວັນແຫ່ງຊີວິດ ທີ່ຮູ້ຊຶ້ງເຖິງຄຸນຄ່າຂອງຄຳວ່າຮັກ ຂອງຄຳວ່າອິດສະຫຼະພາບທີ່ທຸກຄົນຕ້ອງການ ແລະ ຄວາມຢູ່ລອດ ທັງເປັນຊ່ອງທາງຊີ້ໃຫ້ເຫັນຄຸນຄ່າຂອງທຳມະຊາດອີກດ້ວຍ, ຮັກສັດສາວາສິ່ງທີ່ເຮົາເຫັນວ່າສວຍງາມ ແລະໜ້າຮັກຈາກທຳມະຊາດ ກໍຄວນຮັກດ້ວຍໃຈ ແຕ່ຢ່າຈັບມາຕັດສິດເສລີພາບ, ສັດກໍເໝືອນຄົນ ທຸກສິ່ງທີ່ມີຊີວິດ ຍ່ອມມີສັນຍະຊາດຂອງຕົນໄປຕາມທຳມະຊາດສ້າງ.

ຂໍຂອບໃຈ.

ນະຄອນຫຼວງວຽງຈັນ, ວັນທີ 7 ຕຸລາ 2011

ຜູ້ອຳນວຍການ ສຳນັກພິມແສງສຸວັນ

**ກົງເດືອນ ເພດຕະວົງ**

# ຄຳນຳ

ທ່ານກະວິນ ກຽງຄຳຊິນນີ ຫຼືທີ່ນັກອ່ານຫຼາຍຄົນຮູ້ຈັກໃນນາມ ປາກກາ ກະວິນເນ ໄດ້ປະກອບສ່ວນຜົນງານໃຫ້ກັບວົງການວັນນະຄະດີລາວ ທັງທີ່ເປັນບົດສາລະຄະດີ, ເລື່ອງສັ້ນ ແລະ ກາບກອນ ເຄີຍໄດ້ຮັບລາງວັນໃນບັ້ນກວດສອບຕ່າງໆ ຫຼາຍຄັ້ງ ມີຜົນງານຮ່ວມເຫຼັ້ມເປັນຂອງຕົນເອງ ເຊັ່ນ: ສາລະຄະດີຂັບງື່ມ, ກະວີພາຫຼຸງ, ອະດີດທີ່ໜ້າຄົບຂັນ, ອ່ານມ່ວນຊວນຫົວ, ສອດສານຖານຮັກ ...

ບົດກະວີ "ຫອມກິ່ນດວງຈຳປາ" ຂອງກະວິນເນ ໄດ້ຮັບລາງວັນສີນໄຊ ລາງວັນນະກຳສ້າງສັນດີເດັ່ນ ປະຈຳປີ 2006 ຂອງວາລະສານວັນນະສິນ.

"ສາລິກາຄືນຖິ່ນ" ເປັນເລື່ອງລາວທີ່ສະທ້ອນຊີວິດສັງຄົມໃນຍຸກປັດຈຸບັນ ພົວພັນເຖິງບັນຫາສິ່ງແວດລ້ອມ ເປັນຖ້ອຍຄຳທີ່ສະແດງເຖິງຄວາມເປັນຫ່ວງເປັນໃຍ ຕໍ່ຄວາມອຸດົມສົມບູນຂອງປ່າດົງທົ່ງຫາມ ຊຶ່ງຜູ້ແຕ່ງອີງໃສ່ຄວາມເປັນຈິງທີ່ເກີດຂຶ້ນ ແລະ ເພີ່ມເຕີມສີສັນ ປະພັນຕາມຈິນຕະນາການ ປະສານສອດແຊມຊອນ ເຮັດໃຫ້ໜ້າອ່ານ ທັງໃຫ້ຂໍ້ຄິດດີໆ ອີກດ້ວຍ.

# ສະເໜີເລື່ອງ

ເລື່ອງ "ສາລິກາຄືນຖິ່ນ" ເປັນນິຍາຍກ່ຽວກັບສັດຊະນິດໜຶ່ງ ເອີ້ນວ່ານົກສາລິກາ (ນົກສັງກາ) ນົກປະເພດນີ້ມັກດຳລົງຊີວິດຢູ່ໃນປ່າໂຄກ ແຖວໆ ແຂວງສະຫວັນນະເຂດ ຫຼືເຂດພາກໃຕ້ຂອງລາວ.

ນົກສາລິກາ ເປັນນົກທີ່ບໍ່ຄ່ອຍຈະແຜ່ຫຼາຍ, ປີໜຶ່ງຈະໄຂ່ ຫຼື ໃຫ້ກຳເນີດລູກພຽງຄັ້ງດຽວ (ໃນລະດູເດືອນຫົກ) ນົກສາລິກາໃຫ້ກຳເນີດລູກແຕ່ພຽງສອງໂຕ, ໂດຍມີໂຕຜູ້ ແລະ ໂຕແມ່ ອອກມາພ້ອມໆກັນ, ຊຶ່ງແມ່ນທຳມະຊາດເປັນຜູ້ກຳນົດຊາຕາກຳໃຫ້ພວກມັນຕາມສັນຊາດຕະຍານ.

ນົກສາລິກາ ເມື່ອເກີດອອກມາເປັນຄູ່ ພວກມັນກໍຈະຢູ່ຮ່ວມກັນແບບເປັນຄູ່ຊີວິດ ຕະຫຼອດອາຍຸໄຂ, ແຕ່ຖ້າໂຕໃດໂຕໜຶ່ງຫາກຖືກອຸບັດເຫດ ຫຼືອື່ນໆ ເອີ້ນວ່າຕາຍຈາກໄປ, ສ່ວນສາລິກາໂຕທີ່ຍັງມີຊີວິດ ກໍຕ້ອງກັ້ນໃຈຕາຍໄປຕາມໆກັນ ຫຼືບໍ່ດັ່ງນັ້ນ ມັນກໍຈະຢູ່ຜູ້ດຽວຢ່າງປ່ຽວພອຍ ຈົນກວ່າຈະໄດ້ພົບສາລິກາໂຕອື່ນທີ່ຕົກຢູ່ໃນຊາຕາກຳແບບດຽວກັນ ແລ້ວກໍຈັບຄູ່ຮ່ວມກັນ, ແຕ່ຖ້າໂຊກບໍ່ເຂົ້າຂ້າງແລ້ວ ມັນກໍຈະໂດດດ່ຽວປ່ຽວພອຍໄປຈົນຊົ່ວຊີວິດ.

ຄວາມງົດງາມຂອງເລື່ອງຢ່າງໜຶ່ງກໍຄື ການສອດແຊກຄວາມຮູ້ທາງດ້ານທຳມະຊາດ ຂອງຊີວິດນິກສາລິກາ ເຊິ່ງລາງເທື່ອອາດຈະເປັນບົດຮຽນອັນສຳຄັນໃຫ້ແກ່ມະນຸດ ຜູ້ມີຄວາມສະຫຼຽວສະຫຼາດກວ່າສັດທັງປວງ.

ເຖິງວ່າ ຕົວລະຄອນຈະມີທັງຄົນ ແລະ ສັດ ແຕ່ແງ່ມູມແນວຄວາມຄິດໃນເລື່ອງ ບັນຫາຂອງເລື່ອງທັງໝົດ ລ້ວນແຕ່ເປັນໜ້າທີ່ຂອງຄົນເປັນຜູ້ແກ້ໄຂ, ດັ່ງນັ້ນ "ສາລິກາຄືນຖິ່ນ" ຈຶ່ງເປັນຄວາມຄິດຄວາມຫວັງຂອງຜູ້ແຕ່ງ ຕໍ່ອະນາຄົດຂອງແຜ່ນດິນ ເຊິ່ງເປັນສົມບັດລວມຂອງຄົນ, ສັດ ແລະ ພືດ.

ຫົວໜ້າອຳນວຍການ ວາລະສານວັນນະສິນ

*ໂອທອງ ຄຳອິນຊູ*

ນົກສາລິກາ ເປັນນົກທີ່ມີຂົນສີດຳເຫຼື້ອມທົ່ວໂຕ, ມີສົບສີເຫຼືອງ ມີແຄ່ງຂາສີເຫຼືອງ ແລະ ມີກ່ານເຫຼືອງຢູ່ຮອບຫົວ ຄ້າຍຄືຜ້າແພ ຄຽນຫົວ. ນົກປະເພດນີ້ມີຮູບໂສມປະນົມພັນງາມ ໜ້າຮັກກວ່ານົກ ອື່ນໆ, ນົກປະເພດນີ້ ຄົນເຮົານິຍົມກັນເອົາມາລ້ຽງຢູ່ຕາມຢ້າວຕາມ ເຮືອນ ເພື່ອປະດັບເອ້ດ້ວຍບຸກຄະລິກແລະສະເໜ່ຂອງມັນ. ອີກຢ່າງ ໜຶ່ງນົກສາລິກາເປັນນົກທີ່ສາມາດເວົ້າພາສາຄົນເຮົາໄດ້ເກັ່ງ, ມີບາງ ໂຕກໍເວົ້າໄດ້ດີສໍ່າກັບຄົນເຮົາອີກດ້ວຍ. ເມື່ອເປັນດັ່ງນັ້ນ ນົກສາລິກາ ຈຶ່ງມີລາຄາແພງ, ຄົນເຮົາໃຜໆກໍມັກໄປຊອກຫາລູກອ່ອນຂອງພວກ ມັນຢູ່ຕາມໂກນກົກໄມ້ ເພື່ອນຳໄປຂາຍໃນລາຄາແພງໆ ສະນັ້ນ ນົກສາລິກາຈຶ່ງມໍ່ຈະສູນພັນໄປ. ຂ້າພະເຈົ້າ ຈຶ່ງຄິດເປັນຫ່ວງນຳສັດ ປະເພດນີ້ຫຼາຍ ຈຶ່ງໄດ້ຄົ້ນຄວ້າປະດິດແຕ່ງ ເລື່ອງ "ສາລິກາຄືນຖິ່ນ" ຂຶ້ນ ເພື່ອຈຸດປະສົງໃຫ້ທຸກຄົນອະນຸລັກຮັກສາ, ອະນຸລັກທຳມະຊາດ, ປົກປັກຮັກສາສະພາບແວດລ້ອມໃຫ້ອຸດົມສົມບູນ, ເພື່ອສົ່ງເສີມການ ອ່ານໃນຊຸມຊົນ ແລະ ເພື່ອເປັນການປຸກລະດົມຈິດສຳນຶກ ໃຫ້ໄປສູ່ ຄວາມເປັນທຳໃນສັງຄົມ.

ປຶ້ມເຫຼັ້ມນີ້ ຂ້າພະເຈົ້າຄິດວ່າ ມັນຈະເປັນການປະກອບສ່ວນ ບໍ່ຫຼາຍກໍໜ້ອຍ ເຂົ້າໃນການປົກປັກຮັກສາສະພາບແວດລ້ອມຢູ່ລາວ ເຮົາໃຫ້ສົມບູນ; ເລື່ອງນີ້ ຜູ້ຂຽນອາດບໍ່ປາສະຈາກໄດ້ ໃນຂໍ້ຂາດຕົກ ບົກພ່ອງ ຈຶ່ງຂໍຄຳຕິຊົມນຳທ່ານຜູ້ອ່ານດ້ວຍ.

*ຈາກຜູ້ຂຽນ*
*ຂໍຂອບໃຈ.*



# ສະລິກາຄືນຖິ່ນ

ການພັດພາກຈາກຖິ່ນກຳເນີດ ໂດຍບໍ່ມີຈິດໃຈອາສາ ຈະພາໃຫ້ຂາດຄວາມເປັນອິດສະຫຼະ, ຖ້າຫາກບໍ່ມີເງື່ອນໄຂ ...



# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ